# ແກມຊິວ (GAMCIL)

## ໂຄງການ ສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ

### ຝຶກອົບຮົມການລາຍງານບັນຫາສີຂຽວໃຫ້ແກ່ນັກຂ່າວລາວ

ໃນວັນທີ 23-27 ມິຖຸນາ 2025, ສະມາຄົມນັກຂ່າວແຫ່ງ ສປປ ລາວ ແລະ ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ໄດ້ສືບຕໍ່ຈັດຊຸດຝຶກອົບຮົມການລາຍງານຂ່າວບັນຫາສີຂຽວ ໃຫ້ແກ່ ນັກຂ່າວລາວ ພາຍໃຕ້ໂຄງການ GAMCIL ທີ່ ນະຄອນຫຼວງວຽງຈັນ ໂດຍໄດ້ມີຕົວແທນນັກຂ່າວ 20 ທ່ານ ຈາກນະຄອນຫຼວງວຽງຈັນ, ແຂວງວຽງຈັນ, ແຂວງ ບໍລິຄຳໄຊ ແລະ ແຂວງ ໄຊສົມບູນ ເຂົ້າຮ່ວມ.



ຈຸດປະສົງຂອງການຝຶກອົບຮົມແມ່ນ ເພື່ອເພີ່ມຄວາມອາດສາມາດໃຫ້ແກ່ນັກຂ່າວລາວ ໃນການລາຍງານຂ່າວກ່ຽວກັບບັນຫາສິ່ງແວດລ້ອມ ແລະ ການປ່ຽນແປງຂອງດິນຟ້າອາກາດ, ເພີ່ມຄວາມຮັບຮູ້ກ່ຽວກັບສິ່ງແວດລ້ອມ ເພື່ອຊ່ວຍໃຫ້ສາມາດຂຽນຂ່າວການພັດທະນາສີຂຽວໄດ້ຢ່າງລະອຽດ, ການໃຫ້ຄວາມຮູ້ຈັນຍາບັນນັກຂ່າວ, ໃຫ້ຄວາມຮູ້ກ່ຽວກັບບົດບາດທາງເພດ ແລະ ສິດທິ ໃນຍຸກດິຈິຕອນ, ການນຳໃຊ້ເຄື່ອງມືດິຈິຕອນ ໃນການຜະລິດຂ່າວ ແລະ ການເຜີຍແຜ່ຂ່າວອອກສູ່ສັງຄົມອອນລາຍໃຫ້ມີຄວາມປອດໄພ.








## ການທັດສະນະສຶກສາໃຫ້ແກ່ນັກຂ່າວລາວ



ໃນວັນທີ 27-29 ມິຖຸນາ 2025, ໂຄງການ GAMCIL ໄດ້ນຳພານັກຂ່າວພາກກາງ ໄປທັດສະນະສຶກສາ ທີ່ ເມືອງວັງວຽງ, ແຂວງວຽງຈັນ ພາຍໃຕ້ຮູບແບບການທ່ອງທ່ຽວແບບອະນຸລັກ ເພື່ອເປັນການລົງຈັດຕັ້ງປະຕິບັດຕົວຈິງ ໂດຍການນຳໃຊ້ບົດຮຽນທີ່ໄດ້ຮຽນມາ ເຂົ້າໃນການເກັບກຳຂໍ້ມູນ ທີ່ຖ້ຳອ່າງຫຼວງ ແລະ ສະຖານທີ່ສຶກສານິເວດ ວຽງທາລາ. ເຊິ່ງນັກຂ່າວສາມາດນຳໃຊ້ຂໍ້ມູນດັ່ງກ່າວເຂົ້າໃນການປະກວດແຂ່ງຂັນຂຽນຂ່າວສັ້ນ ແລະ ເຮັດວິດີໂອສັ້ນໃນປີນີ້.



ນອກຈາກນັ້ນ, ເພື່ອເປັນການສ້າງຄວາມສາມັກຄີລະຫວ່າງຜູ້ເຂົ້າຮ່ວມດ້ວຍກັນ ໂຄງການກໍ່ໄດ້ເຮັດກິດຈະກຳສ້າງຄວາມສາມັກຄີ ແລະ ກິດຈະກຳຈຳລອງການຄັດແຍກຂີ້ເຫຍື້ອ ເພື່ອສ້າງຄວາມຮັບຮູ້ເຖິງຜົນກະທົບດ້ານບວກ ແລະ ດ້ານລົບໃຫ້ແກ່ຜູ້ເຂົ້າຮ່ວມອີກດ້ວຍ.





## ຝຶກອົບຮົມການລາຍງານຂ່າວບັນຫາສີຂຽວ ໃຫ້ແກ່ ຜູ້ນໍາໃຊ້ສື່ອອນລາຍຕົນທົ່ວໄປ



ໃນວັນທີ 30 ມິຖຸນາ - 4 ກໍລະກົດ 2025, ສະມາຄົມນັກຂ່າວ ແຫ່ງ ສປປ ລາວ ແລະ ອົງການແຄຣ໌ ລາວ ໄດ້ຈັດການຝຶກອົບຮົມໃຫ້ແກ່ ຜູ້ນໍາໃຊ້ສື່ອອນລາຍຕົນທົ່ວໄປ ພາຍໃຕ້ໂຄງການ GAMCIL ມີຜູ້ເຂົ້າຮ່ວມທັງໝົດ 39 ຄົນ, ຍິງ 25 ຄົນ, ຜູ້ເຂົ້າຮ່ວມຈາກຫຼວງພະບາງ 3 ຄົນ ແລະ ຈໍາປາສັກ 1 ຄົນ ເປັນຍິງທັງໝົດ.




ຈຸດປະສົງຂອງການຝຶກອົບຮົມກໍ່ແມ່ນເພື່ອຊ່ວຍໃຫ້ຜູ້ເຂົ້າຮ່ວມມີຄວາມເຂົ້າໃຈຫຼາຍຂຶ້ນຕໍ່ກັບບັນຫາສິ່ງແວດລ້ອມ ທີ່ເກີດຂຶ້ນ, ເພື່ອຮຽນຮູ້ການສ້າງເນື້ອຫາ ແລະ ເຕັກນິກການຜະລິດເນື້ອຫາຜ່ານເຄື່ອງມືດິຈິຕອນ, ເຂົ້າໃຈໃນຄວາມສໍາຄັນ ຂອງຄວາມສະເໝີພາບທາງເພດຕໍ່ກັບການປ່ຽນແປງດິນຟ້າອາກາດ. ການສ້າງແຜນຜະລິດແຄມເປນ ກ່ຽວກັບການພັດທະນາສີຂຽວ. ພາຍຫຼັງສໍາເລັດກໍ່ໄດ້ຜະລິດເນື້ອຫາທີ່ເປັນທັງໂປສເຕີ້ ແລະ ວິດີໂອ ໂດຍນໍາໃຊ້ສິ່ງທີ່ໄດ້ຮຽນມາເຂົ້າຊ່ວຍໃນການຜະລິດ.





## ຝຶກອົບຮົມຄູຝຶກ ການຜະລິດເນື້ອຫາສີຂຽວ ແລະ ການວາງແຜນການຝຶກອົບຮົມ



ວັນທີ 7-9 ກໍລະກົດ 2025, ໂຄງການ GAMCIL ໄດ້ຈັດການຝຶກອົບຮົມຄູຝຶກ ເພື່ອເປັນການສິ່ງຕໍ່ບົດຮຽນການລາຍງານຂ່າວບັນຫາສີຂຽວ ແລະ ວາງແຜນການຝຶກອົບຮົມໃຫ້ແກ່ພະນັກງານໂຄງການ ແລະ ສະມາຄົມນັກຂ່າວ ແຫ່ງ ສປປ ລາວ. ມີຜູ້ເຂົ້າຮ່ວມທັງໝົດ 13 ຄົນ, ຍິງ 4 ຄົນ. ເຊິ່ງໄດ້ມີຕົວແທນຜູ້ເຂົ້າຮ່ວມໂຄງການຈາກແຂວງ ຫຼວງພະບາງ ແລະ ຈໍາປາສັກ ເຂົ້າຮ່ວມນໍາ.



ຈຸດປະສົງແມ່ນເພື່ອຊ່ວຍໃຫ້ຜູ້ເຂົ້າຮ່ວມໄດ້ມີທັກສະການເປັນຄູຝຶກທີ່ດີ, ເພື່ອຊ່ວຍໃຫ້ສາມາດນໍາໃຊ້ເຄື່ອງມືດິຈິຕອນໄດ້ດີຂຶ້ນ ແລະ ເພື່ອຊ່ວຍໃຫ້ສາມາດສ້າງແຜນການຝຶກອົບຮົມຂອງຕົນເອງ ຜ່ານການທົດລອງຂຶ້ນຝຶກຕົວຈິງ. ພາຍຫຼັງທີ່ສໍາເລັດການຝຶກອົບຮົມ ຜູ້ເຂົ້າຮ່ວມໄດ້ທົດລອງການສ້າງແຜນຝຶກອົບຮົມ ແລະ ໄດ້ອະທິບາຍກ່ຽວກັບແຜນການຝຶກຂອງຕົນເອງໃຫ້ກັບຜູ້ເຂົ້າຮ່ວມ ແລະ ຄູຝຶກ ເພື່ອນໍາເອົາຄໍາແນະນໍາ ໄປປັບປຸງ ແລະ ພັດທະນາເປັນບົດສອນຂອງຕົນເອງ.






## ຝຶກອົບຮົມການເປັນຄູຝຶກ ບົດບາດແລະ ຄວາມສະເໝີພາບທາງເພດ



ໃນວັນທີ 23-25 ກໍລະກົດ 2025, ອົງການແຄຣ໌ ຮ່ວມກັບໂຄງການ GAMCIL ໄດ້ຈັດຝຶກອົບຮົມຄູຝຶກ ບົດບາດ ແລະ ຄວາມສະເໝີພາບທາງເພດ ທີ່ເມືອງວັງວຽງ , ແຂວງວຽງຈັນ ໂດຍມີຜູ້ເຂົ້າຮ່ວມທັງໝົດ 13 ຄົນ ຍິງ 5 ຄົນ. ຈຸດປະສົງກໍແມ່ນເພື່ອ ຊ່ວຍໃຫ້ຜູ້ເຂົ້າຮ່ວມເຂົ້າໃຈໃນວຽກງານບົດບາດທາງເພດຫຼາຍຂຶ້ນ.



ຜ່ານການສົນທະນາກັນ, ຜູ້ເຂົ້າຮ່ວມສາມາດຮູ້ວິທີການສອນທີ່ເໝາະສົມຫຼາຍຂຶ້ນຜ່ານການທົດລອງຂຶ້ນສອນຕົວຈິງ ແລະ ສາມາດສ້າງແຜນການສອນ ເພື່ອນຳໃຊ້ເຂົ້າໃນການຝຶກອົບຮົມໄດ້.

ຜົນໄດ້ຮັບແມ່ນພວກເຂົາມີບົດສອນເປັນຂອງຕົນເອງ ແລະ ສາມາດນຳໄປສອນຕໍ່ໃຫ້ກັບຜູ້ເຂົ້າຮ່ວມຂອງໂຄງການ ກໍ່ຄື ການຝຶກອົບຮົມການລາຍງານຂ່າວບັນຫາສີຂຽວໃຫ້ແກ່ ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ.



## ຝຶກອົບຮົມການລາຍງານຂ່າວບັນຫາສີຂຽວໃຫ້ແກ່ອົງການຈັດຕັ້ງສັງຄົມລາວ



ໃນວັນທີ 28 ກໍລະກົດ - 1 ສິງຫາ 2025, ສະມາຄົມນັກຂ່າວ ແຫ່ງ ສປປ ລາວ ແລະ ອົງການແຄຣ໌ ລາວ ຈັດຊຸດຝຶກອົບຮົມການລາຍງານຂ່າວບັນຫາສີຂຽວ ໃຫ້ແກ່ ອົງການຈັດຕັ້ງສັງຄົມລາວ ພາຍໃຕ້ໂຄງການ GAMCIL ທີ່ນະຄອນຫຼວງວຽງຈັນ. ມີຜູ້ເຂົ້າຮ່ວມ 40 ຄົນ, ຍິງ 21 ຄົນ ຈາກ ນະຄອນຫຼວງວຽງຈັນ, ແຂວງ ບໍ່ແກ້ວ, ອັດຕະປື, ຊຽງຂວາງ ແລະ ຈຳປາສັກ.



ຈຸດປະສົງກໍແມ່ນເພື່ອ ເພີ່ມຄວາມຮູ້ໃນການລາຍງານຂ່າວກ່ຽວກັບບັນຫາສິ່ງແວດລ້ອມ ເພື່ອຊ່ວຍໃຫ້ສາມາດສ້າງເນື້ອຫາ ກ່ຽວກັບການພັດທະນາສີຂຽວໄດ້ຢ່າງລະອຽດ, ການໃຫ້ຄວາມຮູ້ຈັນຍາບັນນັກຂ່າວ, ຄວາມສຳຄັນຂອງບົດບາດທາງເພດ ແລະ ສິດທິ ໃນຍຸກດິຈິຕອນ, ການນຳໃຊ້ເຄື່ອງມືດິຈິຕອນໃນການຜະລິດເນື້ອຫາ ແລະ ການເຜີຍແຜ່ເນື້ອຫາອອກສູ່ສັງຄົມອອນລາຍໃຫ້ມີຄວາມປອດໄພ.

ຜົນໄດ້ຮັບແມ່ນສາມາດຜະລິດເນື້ອຫາທີ່ເປັນໂປສເຕີ້ ແລະ ວິດີໂອ ທີ່ຕິດພັນກັບບັນຫາສີຂຽວ, ສາມາດຜະລິດເນື້ອຫາໂດຍການນຳໃຊ້ເຄື່ອງມືດິຈິຕອນເຂົ້າມາຊ່ວຍ ແລະ ນຳສະເໜີບົດໄດ້ຢ່າງມີປະສິດທິພາບ, ສັ້ນກະທັດຮັດ.



## ການລົງເກັບກຳຂໍ້ມູນເພື່ອປະເມີນໄລຍະກາງຂອງໂຄງການ GAMCIL

ໃນວັນທີ 29 ກໍລະກົດ - 13 ສິງຫາ 2025, ສະມາຄົມນັກຂ່າວ ແຫ່ງ ສປປ ລາວ, ອົງການແຄຣ໌ ລາວ ແລະ ຊ່ຽວຊານດ້ານການເກັບກຳຂໍ້ມູນ ໄດ້ລົງເກັບກຳຂໍ້ມູນໃນພື້ນທີ່ເປົ້າໝາຍຂອງໂຄງການທີ່ແຂວງຫຼວງພະບາງ ເຊິ່ງມີຜູ້ເຂົ້າຮ່ວມ 21 ຄົນ, ຍິງ 8 ຄົນ, ແຂວງ ຈຳປາສັກ 16 ຄົນ, ຍິງ 10 ຄົນ ແລະ ນະຄອນຫຼວງວຽງຈັນ 28 ຄົນ, ຍິງ 18 ຄົນ.



ນອກຈາກນັ້ນ, ຍັງໄດ້ເຮັດເປັນລິ້ງແບບສອບຖາມອອນລາຍ ເພື່ອສົ່ງໃຫ້ແກ່ຜູ້ເຂົ້າຮ່ວມທີ່ຢູ່ຕ່າງແຂວງ ເພື່ອໃຫ້ທຸກຄົນໄດ້ມີສ່ວນຮ່ວມໃນການປະເມີນໄລຍະກາງຂອງໂຄງການ.

ພາຍຫຼັງທີ່ສຳເລັດການເກັບກຳຂໍ້ມູນ, ຊ່ຽວຊານເກັບກຳຂໍ້ມູນຈະໄດ້ເຮັດບົດລາຍງານ ແລະ ສະຫຼູບຜົນຂອງການປະເມີນໄລຍະກາງຂອງໂຄງການ ເຊິ່ງຄາດວ່າຈະສຳເລັດໃນເດືອນ ກັນຍາ 2025.





## ສະເຫຼີມສະຫຼອງວັນສື່ມວນຊົນ ແລະ ຈັດພິມຈຳໜ່າຍ ຄົບຮອບ 75 ປີ




ໃນວັນທີ 11-13 ສິງຫາ 2025, ສະມາຄົມນັກຂ່າວລາວ ແລະ ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ, ໂຄງການ GAMCIL ໄດ້ເຂົ້າຮ່ວມງານສະເຫຼີມສະຫຼອງວັນສື່ມວນຊົນ ແລະ ການຈັດພິມຈຳໜ່າຍ ຄົບຮອບ 75 ປີ ທີ່ ຫໍວັດທະນະທຳ ແຫ່ງຊາດ.

ໂຄງການໄດ້ສະໜັບສະໜູນການຜະລິດເສື້ອເພື່ອສະເຫຼີມສະຫຼອງ ວັນດັ່ງກ່າວ ພ້ອມນັ້ນ ກໍ່ໄດ້ເຊີນຜູ້ປະສານງານໂຄງການ ແລະ ຕົວແທນນັກຂ່າວຈາກພື້ນທີ່ເປົ້າໝາຍຂອງໂຄງການເຂົ້າຮ່ວມນຳ.

ນອກຈາກນັ້ນ ໃນວັນທີ 16 ສິງຫາ 2025, ໄດ້ຈັດຂະບວນການຍ່າງເພື່ອສຸຂະພາບ ຈັດໂດຍ ກົມສື່ມວນຊົນ, ຄະນະໂຄສະນາອົບຮົມສູນກາງພັກ ເຊິ່ງໄດ້ເລີ່ມຍ່າງຈາກພະທາດຫຼວງວຽງຈັນ ຫາປະຕູໄຊ ແລະ ກັບຄືນສູ່ພະທາດຫຼວງວຽງຈັນ. ເຊິ່ງມີຜູ້ເຂົ້າຮ່ວມຫຼາຍກວ່າ 100 ຄົນ.






## ຝຶກອົບຮົມການລາຍງານຂ່າວບັນຫາສີຂຽວໃຫ້ແກ່ອົງການຈັດຕັ້ງສັງຄົມລາວ



ໃນວັນທີ 18 - 22 ສິງຫາ 2025, ສະມາຄົມນັກຂ່າວແຫ່ງ ສປປ ລາວ ແລະ ອົງການແຄຣ໌ ລາວ ຈັດຊຸດຝຶກອົບຮົມການລາຍງານຂ່າວບັນຫາສີຂຽວ ໃຫ້ແກ່ ອົງການຈັດຕັ້ງສັງຄົມລາວ ພາຍໃຕ້ໂຄງການ GAMCIL ທີ່ນະຄອນຫຼວງວຽງຈັນ. ມີຜູ້ເຂົ້າຮ່ວມ 33 ຄົນ, ຍິງ 28 ຄົນ ຈາກ ນະຄອນຫຼວງວຽງຈັນ, ແຂວງເຊກອງ 2 ຄົນ, ສະຫວັນນະເຂດ 1 ຄົນ, ຫຼວງພະບາງ 1 ຄົນ ແລະ ຈຳປາສັກ 1 ຄົນ.

ຈຸດປະສົງກໍ່ແມ່ນເພື່ອ ເພີ່ມຄວາມຮູ້ໃນການລາຍງານຂ່າວກ່ຽວກັບບັນຫາສິ່ງແວດລ້ອມ ເພື່ອຊ່ວຍໃຫ້ສາມາດສ້າງເນື້ອຫາ ກ່ຽວກັບການພັດທະນາສີຂຽວໄດ້ຢ່າງລະອຽດ, ຈັນຍາບັນນັກຂ່າວ, ຄວາມສຳຄັນຂອງບົດບາດທາງເພດ ແລະ ສິດທິ ໃນຍຸກດິຈິຕອນ, ການນຳໃຊ້ເຄື່ອງມືດິຈິຕອນໃນການຜະລິດເນື້ອຫາ ແລະ ການເຜີຍແຜ່ເນື້ອຫາອອກສູ່ສັງຄົມອອນລາຍໃຫ້ມີຄວາມປອດໄພ.



ຜົນໄດ້ຮັບແມ່ນສາມາດຜະລິດເນື້ອຫາທີ່ເປັນໂປສເຕີ້ ແລະ ວິດີໂອ ທີ່ຕິດພັນກັບບັນຫາສີຂຽວ, ສາມາດຜະລິດເນື້ອຫາ ໂດຍການນຳໃຊ້ເຄື່ອງມືດິຈິຕອນເຂົ້າມາຊ່ວຍ ແລະ ນຳສະເໜີບົດໄດ້ຢ່າງມີປະສິດທິພາບ. ບົດດັ່ງກ່າວຈະໄດ້ຮັບການປັບປຸງ ແລະ ໂພສລົງສື່ອອນລາຍ ເພື່ອເປັນການລົນນະລົງເຖິງຜົນກະທົບຕໍ່ກັບສິ່ງແວດລ້ອມທີ່ກຳລັງເກີດຂຶ້ນໃນປັດຈຸບັນ.

"ການຝຶກອົບຮົມຄັ້ງນີ້ ໄດ້ເຮັດໃຫ້ນ້ອງມີແຮງບັນດານໃຈ ແລະ ຄວາມຫມັ້ນໃຈ ທີ່ຈະດຳເນີນການເຜີຍແຜ່ເນື້ອຫາບັນຫາສີຂຽວ. ຖ້າພວກເຮົາບໍ່ເລີ່ມຕົ້ນເຮັດໃນຕອນນີ້, ແລ້ວພວກເຮົາຈະເຮັດຕອນໃດ?" ສຸລິໂຍ ເວົ້າດ້ວຍຄວາມໜັກແໜ້ນ.

ຂໍຂອບໃຈທີ່ໃຫ້ປະສົບການແກ່ນ້ອງ, ລາວກ່າວຂອບໃຈອົງການແຄຣ໌ ແລະ ໂຄງການ ແກມຊິວ. "ນ້ອງຢາກບອກໄວໜຸ່ມວ່າ: ພວກເຮົາແມ່ນຄົນລຸ້ນໃໝ່ທີ່ຕ້ອງຮຽນຮູ້ ແລະ ນຳໄປຈັດຕັ້ງປະຕິບັດ. ບັນຫາສິ່ງແວດລ້ອມມີຜົນກະທົບກັບທຸກໆຄົນ. ສະນັ້ນພວກເຮົາຄວນໃຊ້ສື່ຕ່າງໆເພື່ອສຶກສາອົບຮົມ, ສ້າງແຮງບັນດານໃຈ, ແລະ ສ້າງຄວາມແຕກຕ່າງ - ໂດຍເລີ່ມຕົ້ນຈາກຕົວເຮົາເອງ."



**ທ້າວ ສຸລິໂຍ ເມກສຸວັນ:** ສ້າງແຮງບັນດານໃຈໃຫ້ໄວໜຸ່ມໃສ່ໃຈຕໍ່ບັນຫາສິ່ງແວດລ້ອມ



**ນາງ ນໍ້າຝົນ ແມນວິໄລ:** ຫັນປ່ຽນສິ່ງທີ່ມັກ ໄປສູ່ເປົ້າໝາຍຜ່ານການສື່ສານກ່ຽວກັບສະພາບດິນຟ້າອາກາດ

"ນ້ອງເອງ ເຂົ້າຮ່ວມໃນການຝຶກອົບຮົມຄັ້ງນີ້ຍ້ອນວ່າມີຄວາມມັກຮັກໃນສິລະປະ ແລະ ດ້ານ AI. ການຝຶກອົບຮົມນີ້ແມ່ນໂອກາດດີສຳລັບນ້ອງໃນການໄດ້ຮຽນຮູ້ທັງສອງຢ່າງນີ້, ພ້ອມທັງໄດ້ຮຽນຮູ້ອີກຫຼາຍໆຢ່າງທີ່ເປັນປະໂຫຍດ ແລະ ສຳຄັນ," ນໍ້າຝົນ ກ່າວ.

ກ່ອນເຂົ້າຮ່ວມຝຶກອົບຮົມຄັ້ງນີ້, ລາວໄດ້ມີຄວາມເຂົ້າໃຈກ່ຽວກັບບັນຫາສິ່ງແວດລ້ອມ ແລະ ການປ່ຽນແປງຂອງດິນຟ້າອາກາດ ແບບທົ່ວໄປເທົ່ານັ້ນ ແຕ່ລາວບໍ່ໄດ້ມີຄວາມຮູ້ຢ່າງເລິກເຊິ່ງໃນດ້ານນີ້. ລາວກ່າວວ່າ "ນ້ອງມີຄວາມຮູ້ກ່ຽວກັບດິນຟ້າອາກາດ ແລະ ສະພາບອາກາດ ແບບທົ່ວໄປ ແຕ່ບໍ່ຍັງບໍ່ໄດ້ຮູ້ລາຍລະອຽດຢ່າງເລິກເຊິ່ງ ສະນັ້ນການເຂົ້າຮ່ວມຝຶກອົບຮົມຄັ້ງນີ້ຈຶ່ງໄດ້ຊ່ວຍໃຫ້ນ້ອງໄດ້ມີຄວາມເຂົ້າໃຈຫຼາຍຂຶ້ນ."






### ຈາກດາວ TIKTOK ກ້າວສູ່ການເປັນນັກເວົ້າກ່ຽວກັບສະພາບດິນຟ້າອາກາດ: ຫລອຍແຮນລີ້ ກາຍເປັນກະບອກສຽງກ່ຽວກັບບັນຫາສີຂຽວ ສຳລັບໄວໜຸ່ມ

ທ້າວ ຫລອຍແຮນລີ້ ສີລາຄຳ, ອາຍຸ 19 ປີ ນັກສຶກສາ ຈາກ ບ້ານໜອງວຽງຄຳ, ນະຄອນຫຼວງວຽງຈັນ ເປັນທີ່ຮູ້ຈັກກັນດີທາງສື່ອອນລາຍໃນນາມ “Teemodel” ເຊິ່ງລາວໄດ້ສ້າງເນື້ອຫາທາງຕິກຕັອກ ທີ່ເປັນຕົວແບບ ແລະ ການເວົ້າໃນທີ່ສາທາລະນະ. ແຕ່ໃນປັດຈຸບັນ, ລາວກຳລັງໃຊ້ເວທີຂອງລາວສຳລັບສິ່ງທີ່ໃຫຍ່ກວ່ານັ້ນ - ກໍ່ຄືການນຳໃຊ້ເຂົ້າໃນການປູກຈິດສຳນຶກກ່ຽວກັບສິ່ງແວດລ້ອມ.

"ແຕ່ກ່ອນ ນ້ອງເຄີຍລັງເລທີ່ຈະເຮັດ ເພາະບໍ່ຮູ້ວ່າຈະເລີ່ມຕົ້ນແນວໃດ," ລາວກ່າວ. "ແຕ່ຕອນນີ້ນ້ອງມີທັກສະໃນການໃຊ້ເຄື່ອງມືຕ່າງໆ, ມີຄວາມໝັ້ນໃຈ, ແລະ ເຄືອຂ່າຍໝູ່ເພື່ອນທີ່ມີໃຈມັກຮັກດ້ານດຽວກັນ. ນ້ອງພ້ອມແລ້ວທີ່ຈະລົງມືເຮັດ.“

ຫລອຍແຮນລີ້ ເລົ່າກ່ຽວກັບປະສົບການຂອງຕົນວ່າ, "ການເຂົ້າຮ່ວມຝຶກອົບຮົມຄັ້ງນີ້ໄດ້ປ່ຽນແປງຕົວນ້ອງທັງພາຍໃນ ແລະ ພາຍນອກ. ນ້ອງໄດ້ມີສະຕິຫຼາຍຂຶ້ນໃນການຊີວິດປະຈຳວັນ, ມີຄວາມໝັ້ນໃຈໃນການສື່ສານຫຼາຍຂຶ້ນ, ແລະ ມີຄວາມກະຕືລືລົ້ນໃນການປະກອບສ່ວນເປັນກະບອກສຽງທາງອອນລາຍ."

**ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ**

ພວກເຮົາປາຖະໜາເຫັນໂລກນີ້ເຕັມໄປດ້ວຍຄວາມຫວັງ, ການໃຫ້ອະໄພ, ສັງຄົມມີຄວາມຍຸຕິທຳ, ທຸກພົ້ນຈາກຄວາມທຸກຍາກ ແລະ ປະຊາຊົນດຳລົງຊີວິດຢູ່ຢ່າງປອດໄພ ແລະ ມີກຽດສັກສີ.

ໃຫ້ທຶນໂດຍ ສະຫະພາບ ເອີຣົບ

Lao Journalists Association

# ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ



ການວາງແຜນຮ່ວມກັນໃນການປັບຕົວຕໍ່ກັບການປ່ຽນແປງສະພາບດິນຟ້າອາກາດ.

## ແຜນທີ່

ທີ່ຕັ້ງໂຄງການ
ນະຄອນຫຼວງວຽງຈັນ

ພື້ນທີ່ເປົ້າໝາຍ
ຫຼວງພະບາງ, ຈຳປາສັກ



ໄລຍະເວລາ
ມີນາ 2023 - ກຸມພາ 2027

ຜູ້ໄດ້ຮັບຜົນປະໂຫຍດ
ທາງກົງ ຜູ້ຊາຍ ແລະ ແມ່ຍິງ 6,155 ຄົນ
ທາງອ້ອມ ຜູ້ຊາຍ ແລະ ແມ່ຍິງ 10,000 ຄົນ

ຄູ່ຮ່ວມງານ
ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກົມສື່ມວນຊົນ ແລະ ສະມາຄົມນັກຂ່າວ ແຫ່ງ ສປປ ລາວ

## ຄວາມເປັນມາຂອງ ໂຄງການ

ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ ແມ່ນໂຄງການໜຶ່ງທີ່ໄດ້ເຮັດວຽກກັບບັນດາສື່ມວນຊົນຂອງລັດ ແລະ ເອກະຊົນ ເພື່ອປັບປຸງທັກສະວິຊາຊີບຂອງນັກຂ່າວລາວ ໂດຍການເພີ່ມຄວາມຮູ້ທາງດ້ານສື່ດິຈິຕອລ ແລະ ຄວາມເຂົ້າໃຈກ່ຽວກັບສື່ແບບໃໝ່. ໂຄງການ ໄດ້ຮັບການສະໜັບສະໜູນຈາກ ໂຄງການ ພັດທະນາສີຂຽວຂອງສະຫະພາບ ເອີຣົບ ທີ່ໃຫ້ການສະໜັບສະໜູນນະໂຍບາຍໃນຂົງເຂດດ້ານການປັບຕົວ ແລະ ການຫຼຸດຜ່ອນຄວາມສ່ຽງຕໍ່ກັບດິນຟ້າອາກາດ, ການພັດທະນາເສດຖະກິດ-ສັງຄົມ ແບບຍືນຍົງ.

ໂຄງການ ຍັງໄດ້ເສີມຂະຫຍາຍການຮັບຮູ້ທາງດ້ານ ສື່ດິຈິຕອລ ແລະ ການພັດທະນາສີຂຽວ ເພື່ອເພີ່ມການເຂົ້າເຖິງຂໍ້ມູນຂ່າວສານ ການພັດທະນາທີ່ກ່ຽວຂ້ອງກັບບົດບາດທາງເພດ, ສິດທິຂອງຜູ້ອອກແຮງງານ ແລະ ການພັດທະນາຊຸມຊົນໃນ ສປປ ລາວ ທີ່ຕິດພັນກັບການພັດທະນາສີຂຽວແບບຍືນຍົງ. ໂຄງການຍັງຈະເສີມສ້າງການມີສ່ວນຮ່ວມ, ທັດສະນະຄະຕິ, ວິໄສທັດ ແລະ ຄວາມສາມາດຂອງນັກຂ່າວ ດ້ວຍການສຸມໃສ່ການນຳໃຊ້ສື່ຢ່າງເຂັ້ມແຂງ ເພື່ອສົ່ງເສີມການເຕີບໂຕສີຂຽວຂອງປະຊາຊົນ ໃນ ສປປ ລາວ.

ຜ່ານການຝຶກອົບຮົມ, ການປະຊຸມ, ການແຂ່ງຂັນ ແລະ ການເຮັດກິດຈະກຳຕ່າງໆ, ອົງການຈັດຕັ້ງທາງສັງຄົມລາວ, ນັກຂ່າວລາວ, ນັກສ້າງຮູບເງົາ, ຢູທູບເບີ້ ຈະໄດ້ຮັບການເສີມຂະຫຍາຍຄວາມຮູ້ຄວາມສາມາດ, ໃຫ້ພວກເຂົາໄດ້ມີສ່ວນຮ່ວມຢ່າງສ້າງສັນເຂົ້າໃນການວາງນະໂຍບາຍ, ຕິດຕາມ ແລະ ຊຸກຍູ້ ໂດຍຜ່ານການລາຍງານທີ່ມີຄວາມຮັບຜິດຊອບ ແລະ ເປັນມືອາຊີບ ກ່ຽວກັບການພັດທະນາສີຂຽວ.

## ຈຸດປະສົງຂອງ ໂຄງການ

ເພື່ອແກ້ໄຂຊ່ອງວ່າງທາງດ້ານຄວາມຮູ້ທາງສື່ສັງຄົມ, ປັບປຸງການຮູ້ທາງດ້ານສື່ດິຈິຕອລ ແລະ ຫຼຸດຜ່ອນຄວາມສ່ຽງຂອງ "ຂ່າວປອມ" ໂດຍການເສີມສ້າງຂີດຄວາມສາມາດຂອງນັກຂ່າວລາວຢູ່ ນະຄອນຫຼວງວຽງຈັນ, ແຂວງ ຫຼວງພະບາງ ແລະ ແຂວງ ຈຳປາສັກ.

ເພື່ອເພີ່ມທະວີຄວາມຮັບຮູ້ກ່ຽວກັບບັນຫາສີຂຽວ ແລະ ການປ່ຽນແປງດິນຟ້າອາກາດໃນພື້ນທີ່ຊົນນະບົດຂອງ ສປປ ລາວ

## ຜູ້ໃຫ້ທຶນ

ສະຫະພາບ ເອີຣົບ

ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ
2023